Scaling Up
NUTRITION

Civil Society Alliance in Lao PDR

# ພາບລວມເຄືອຂ່າຍອົງການຈັດຕັ້ງທາງສັງຄົມ ເພື່ອສົ່ງເສີມໂພຊະນາການ SUN CSA

**2 ເມສາ 2026**

ນຳສະເໜີໂດຍ: ດຣ ສຸດທິສຸກ ອິນທະວິໄລ
ຮອງອຳນວຍການ PFHA /ປະທານຮ່ວມ SUN CSA

Scaling Up NUTRITION | Civil Society Network

- ລັດຖະບານລາວ ໄດ້ເຂົ້າຮ່ວມ ໃນຂະບວນການປັບປຸງ ໂພຊະນາການ (SUN) ໃນປີ 2011 ເຄືອຂ່າຍອົງການ ຈັດຕັ້ງທາງສັງຄົມ ເພື່ອສົ່ງເສີມ ໂພຊະນາການ ໃນ ສປປ ລາວ (SUN CSA) ເປັນເຄືອຂ່າຍທາງການ ທີ່ໄດ້ຮັບ ການສ້າງຕັ້ງຂຶ້ນ ໃນປີ 2014, ເປັນເຄືອຂ່າຍ ທີ່ ປະກອບດ້ວຍ ບັນດາອົງກອນ COS ລາວ ແລະ INGOs ທີ່ເຮັດວຽກ ເພື່ອສົ່ງເສີມ ວຽກງານ ການປັບປຸງ ໂພຊະນາການໃນ ສປປ ລາວ. ປັດຈຸບັນ ມີອົງກອນສະມາຊິກ ທັງໝົດ 79 ອົງກອນ.
- ເຄືອຂ່າຍ SUN CSA ມີຄະນະ MC, ເຮັດໜ້າທີ່ ເປັນຈຸດປະສານງານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ອົງກອນສະມາຊິກ ໃນການດຳເນີນໂຄງການ ປັບປຸງໂພຊະນາການ ໂດຍໄດ້ຮັບການຊີ້ນຳ ຈາກ ຄະນະບໍລິຫານງານ 10 ທ່ານ ທີ່ເປັນຕົວແທນ ຈາກອົງກອນສະມາຊິກ ແລະ ຖືກເລືອກ ໂດຍສະມາຊິກ.

## *ຂະບວນການ ສົ່ງເສີມໂພຊະນາການ ຫຼື SUN ໃນ ສປປ ລາວ ແມ່ນນໍາພາ ໂດຍ ກະຊວງສາທາລະນະສຸກ ໂດຍຜ່ານ ສູນໂພຊະນາການແຫ່ງຊາດ*



SUN ໃນລາວ ປະກອບມີ 4 ປະເພດເຄືອຂ່າຍ:

1. ເຄືອຂ່າຍຂອງ CSOs
2. ເຄືອຂ່າຍຂອງ ພາກທຸລະກິດ
3. ເຄືອຂ່າຍຂອງ ຜູ້ໃຫ້ທຶນ
4. ເຄືອຂ່າຍຂອງ ອົງການສະຫະປະຊາຊາດ





ກຸ່ມເຮັດວຽກ ທັງ 4 ເຄືອຂ່າຍນີ້ ລ້ວນແລ້ວແຕ່ມີ ເປົ້າໝາຍ ເພື່ອປັບປຸງ ໂພຊະນາການໃນ ສປປ ລາວ ໃຫ້ດີຂຶ້ນ.

# ແຜນຍຸດທະສາດຂອງ SUN CSA ລາວ

- ຍຸດທະສາດ SUN CSA ໄດ້ຖືກພັດທະນາຂຶ້ນ ພາຍໃຕ້ ການປຶກສາຫາລືກັບ CSOs (NPAs) ແລະ ອົງການ ຈັດຕັ້ງທາງສັງຄົມ, INGOs ແລະ ຂະແໜງການ ທີ່ ເຮັດວຽກ ດ້ານໂພຊະນາການ
- ສຳລັບໜ້າທີ່ ຍຸດທະສາດຫຼັກ ປີ 2021-2025 ຂອງ SUN CSA ລາວ ແມ່ນສຸມໃສ່:
    1. ການສ້າງຄວາມອາດສາມາດ
    2. ສູນຂໍ້ມູນຂ່າວສານ
    3. ການຮ່ວມມືກັບ ບັນດາຄູ່ຮ່ວມງານ
    4. ການສົ່ງເສີມ ນະໂຍບາຍຕ່າງໆ
    5. ການບໍລິຫານ ແລະ ຄຸ້ມຄອງ

ຍຸດທະສາດ SUN CSA ລາວ ແມ່ນສຸມໃສ່ວຽກງານ ການສ້າງ ເຄືອຂ່າຍ ແລະ ສ້າງລະບົບ ແລະ ບັນທັດຖານ ຂອງການເຮັດ ວຽກ ທີ່ມີການປະສານສົມທົບກັນ ລະຫວ່າງ ອົງການ ຈັດຕັ້ງ ທາງສັງຄົມ (CSOs) ທັງພາຍໃນ ແລະ ສາກົນ



# ຫົວຂໍ້ບູລິມະສິດຮ່ວມໃນປັດຈຸບັນຂອງ SUN CSA ລາວ

- ເຄືອຂ່າຍ SUN CSA **ເປັນເຄືອຂ່າຍ ທີ່ຂັບເຄື່ອນໂດຍ ສະມາຊິກ ທັງໝົດ**, ຜົນກະທົບ ດ້ານໂພຊະນາການ ແມ່ນ ເກີດຈາກໂຄງການ ຂອງສະມາຊິກ ທີ່ຈັດຕັ້ງປະຕິບັດ ຜ່ານ ຫຼາຍຂະແໜງການ ແລະ ຫຼາຍຫົວຂໍ່.
- ເຖິງຢ່າງໃດກໍຕາມ, **ພວກເຮົາກໍ່ໄດ້ກຳນົດ ຫົວຂໍ້ບູລິມະສິດ ຮ່ວມ ຂອງເຄືອຂ່າຍ** ແລະ ກໍມີການທົບທວນຄືນ ຮ່ວມກັນ ທຸກໆ 6 ເດືອນ ຢ່າງເປັນປົກກະຕິ (ເດືອນກຸມພາ ແລະ ສິງຫາ).
- ຄະນະ MC ເປັນຜູ້ອຳນວຍຄວາມສະດວກ ແລະ ເຕົ້າໂຮມ ຄວາມຮ່ວມມື ລະຫວ່າງ ສະມາຊິກ **ເພື່ອກໍ່ໃຫ້ເກີດ ການ ຂັບເຄື່ອນ ແລະ ປ່ຽນແປງ ໃນແຕ່ລະຫົວຂໍ່ ໃນລະດັບ ນະໂຍບາຍ ແລະ ມະຫາພາກ.**
- **ຫົວຂໍ້ບູລິມະສິດ ຂອງເຄືອຂ່າຍ ປະກອບດ້ວຍ:**
    1. ວຽກງານ 1000 ວັນ
    2. ການລ້ຽງລູກດ້ວຍນ້ຳນົມແມ່
    3. ການຄ້ຳປະກັນ ດ້ານສະບຽງອາຫານ/ການ ປ່ຽນແປງສະພາບດິນຟ້າອາກາດ
    4. ຊຸກຍູ້ການບັງຄັບໃຊ້ດຳລັດແຫ່ງຊາດ ຜະລິດຕະພັນ ທົດແທນນ້ຳນົມແມ່
    5. LSIS III
    6. ການຢຸດຕິ ການຖ່າຍຊະຊາຍ






# ພາລະບົດບາດຂອງຄະນະບໍລິຫານງານ SUN CSA

ຄະນະບໍລິຫານງານ ມີຄວາມຮັບ ຜິດຊອບ ໃນການນໍາພາຄຸ້ມຄອງ ເຄືອຂ່າຍ SUN CSA ແລະ ສະໜັບສະໜູນ ຄະນະ MC ແລະ ສະມາຊິກ ຂອງເຄືອຂ່າຍ ກ້າວໄປສູ່ເປົ້າໝາຍ ຂອງເຄືອຂ່າຍ.



# ຄວາມຮັບຜິດຊອບຂອງຄະນະບໍລິຫານງານ SUN CSA




1. ເຂົ້າຮ່ວມກອງປະຊຸມ ປະຈໍາເດືອນ ຂອງ MC ເພື່ອປຶກສາຫາລື ແລະ ຮ່ວມກັນ ຕັດສິນໃຈ ຕໍ່ກັບວຽກງານຕ່າງໆ. ກອງປະຊຸມ ຈະ ຈັດຄວບຄູ່ກັນ ທັງແບບອອນລາຍ ແລະ ເຊິ່ງໜ້າ, ໃຊ້ເວລາ 2 ຊົ່ວໂມງຕໍ່ຄັ້ງ.
2. ນໍາພາ ແລະ ມີສ່ວນຮ່ວມ ໃນກອງປະຊຸມ SUN CSA ເຊັ່ນ: ເວທີ ສົນທະນາອອນໄລນ໌, ການຝຶກອົບຮົມ ແລະ ກອງປະຊຸມຕ່າງໆ.

- **MC ຈະຖືກມອບໝາຍ ໃຫ້ເປັນເຈົ້າພາບ ຢ່າງໜ້ອຍໜຶ່ງ**
- **ກິດຈະກໍາ ໃນໜຶ່ງປີ ແລະ ເຂົ້າຮ່ວມໃນກິດຈະກໍາອື່ນໆ**
- **ຢ່າງເປັນປົກກະຕິ**.

3. ເຮັດໜ້າທີ່ ເປັນກະບອກສຽງ ຂອງສະມາຊິກ ຢູ່ຂັ້ນແຂວງ (ຜ່ານ

- ການຈັດຕັ້ງປະຕິບັດ ໂຄງການຂອງຕົນ) ເພື່ອລາຍງານ ປະສົບການ ແລະ
- ຄວາມເປັນຈິງ ຂອງສະມາຊິກ ຕໍ່ລະດັບຊາດ ແລະ ລະດັບສາກົນ ຕາມຄວາມຈໍາເປັນ;

4. ເຜີຍແຜ່ວິໄສທັດ, ພາລະກິດ ແລະ ຈຸດປະສົງ ຂອງ SUN CSA

- ໃຫ້ແກ່ຄູ່ຮ່ວມງານ ທຸກພາກສ່ວນ ທີ່ກ່ຽວຂ້ອງ ຕາມກາລະໂອກາດ

# ຄວາມຮັບຜິດຊອບຂອງຄະນະບໍລິຫານງານ SUN CSA







5. **ເປັນຜູ້ຊີ້ນຳ ແລະ ນຳພາ ການປະສານງານ** ລະຫວ່າງ ສະມາຊິກ SUN CSA,
6. **ຕັດສິນໃຈ ດ້ານນະໂຍບາຍ,ແລະ ຍຸດທະສາດ** ໃນການສ້າງຕັ້ງ ແລະ ຄົງໄວ້ ຊຶ່ງການເປັນເຄືອຂ່າຍ SUN CSA ລາວ, ລວມເຖິງທົບທວນຄືນ/ຮັບຮອງ ແລະ ສະໜັບສະໜູນ ການຈັດຕັ້ງປະຕິບັດ ແຜນວຽກປະຈຳປີ ຂອງກອງເລຂາ.
7. **ເຮັດວຽກຮ່ວມກັບ ຜູ້ຕາງໜ້າຈາກອົງການຈັດຕັ້ງທາງສັງຄົມ** ເພື່ອກະກຽມ ເອກະສານ ແນວຄວາມຄິດ, ເອກະສານ ນະໂຍບາຍຕ່າງໆ, ຖະແຫຼງການຈຸດຢືນ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງກັບເຄືອຂ່າຍ SUN CSA ແລະ ກອງເລຂາ SUN ລະດັບໂລກ.
8. **ຕາງໜ້າເຄືອຂ່າຍ SUN CSA** ເຂົ້າຮ່ວມກອງປະຊຸມ ຫຼື ເຂົ້າຮ່ວມ ໃນກຸ່ມວິຊາການຕ່າງໆ (ລະດັບຊາດ ແລະ ສາກົນ), ພ້ອມທັງລາຍງານຄືນ ຂໍ້ສະເໜີແນະຈາກກອງປະຊຸມ ແລະ ກຸ່ມວິຊາການ ທີ່ຕົນເຂົ້າຮ່ວມ ໃຫ້ແກ່ເຄືອຂ່າຍ.

# MC SUN CSA Laos Organization Chart 2026

**PRESIDENT (MC Co-Chair)**



Kelley Khamphouxay
Technical Advisor II , CRS



Dr Southisouk Inthavilay
Deputy Executive Director, PFHA

**MC MEMBER**



Dr Bounyang Latsamy
Public Health and Nutrition Senior Program Manager Plan to International Laos

**MC MEMBER**



Thongchanh Bouphavong
Program Coordinator, ARMI

**MC MEMBER**



Dr Douangsamai Akkhasith
Health and Nutrition Specialist, WVI

**MC MEMBER**



Mr Kuber Adhikari
Health System Advisor, SCI

**MC MEMBER**



Phoutthakone Norphansy
Deputy Director of CHIAs

**MC MEMBER**



Ou Ee Kittikhoun
Board Member, SAEDA

**MC MEMBER**



Khamphoui Saythalat
Director PAKA

**MC MEMBER**



Mr ……………………..
Director of GG

# MC Focus Person of SUN CSA 2026

| ID | Full name | Position | Organization | SUN CSA Role | Focus Person |
|---|---|---|---|---|---|
| 1 | Mrs Kelley Khamphouxay | Technical Advisor II | CRS Laos | Co-Chair | Health, Education |
| 2 | Dr Southisouk Inthavilay | Deputy Executive Director | PFHA | Co-Chair | Health (M&C, RH), Gender |
| 3 | Mr Thongchanh Bouphavong | Program Coordinator | ARMI | MC Member | Agriculture, Education, Gender |
| 4 | Dr Douangsamai Akkhasith | Health and Nutrition Specialist | World Vision Laos | MC Member | Health and Nutrition, WASH, Gender |
| 5 | Mr Khamphoui Saythalat | Director | PAKA | MC Member | Education and Youth leadership |
| 6 | Mr Ou Ee Kittikhoun | Board Member | SAEDA | MC Member | Agribusiness |
| 7 | Miss Phoutthakone Norphansy | Program Director | CHIAs | MC Member | WASH, Climate change, Gender |
| 8 | Dr Bounyang Latsamy | Public Health & Nutrition Senior Program Manager | Plan International Laos | MC Member | Health, WASH, Gender |
| 9 | Kuber Adhikari | Health Systems Advisor | Save the Children Laos | MC Member | Health, WASH and Climate change |
| 10 | ??? | | | | |

# ພວກເຮົາຂໍເຊີນຊວນ ໃຫ້ອົງກອນສະມາຊິກ ພິຈາລະນາ ສະເໜີ ຊື່ຜູ້ຕາງໜ້າ ຈາກອົງກອນຂອງຕົນ ເພື່ອລົງສະໝັກ ຮັບເລືອກ ຕັ້ງ ເຂົ້າໃນຄະນະ MC

- ຄະນະ MC ປະກອບດ້ວຍ ***5 ທ່ານຈາກ CSOs ລາວ ແລະ 5 ທ່ານ ຈາກ INGO***
- ຕໍາແໜ່ງວ່າງມີ 1 ຕໍາແໜ່ງ (INGO)
- ມາດຖານ/ເງື່ອນໄຂ ຂອງຜູ້ທີ່ໄດ້ຮັບ ການສະເໜີຊື່:

1. ເປັນພະນັກງານ ຂອງອົງກອນ ສະມາຊິກ ແລະ ການເຄື່ອນໄຫວ ຈະແມ່ນໃນນາມ ອົງກອນນັ້ນໆ.
2. ບໍ່ຈໍາເປັນຈະຕ້ອງ ແມ່ນລະດັບ ອໍານວຍການສະເໜີໄປ, ແຕ່ເປັນຜູ້ທີ່ມີຄຸນນະວຸດ ແລະ ມີປະສົບການ ທີ່ຕິດພັນກັບ ວຽກງານໂພຊະນາການ (ຜ່ານຂະແໜງການປົ່ນອ້ອມ: ສາທາລະນະສຸກ, ກະສິກໍາ, ສຶກສາ, ບົດບາດຍິງ-ຊາຍ, WASH…); ເພື່ອໃຫ້ສາມາດ ປະກອບຄໍາຄິດເຫັນ ໃຫ້ແກ່ເຄືອຂ່າຍ.
3. ສາມາດມອບໝາຍ/ຮັບປະກັນ ຫຼື ປະສານ ໃຫ້ອົງກອນ ຂອງຕົນດໍາເນີນການ ກ່ຽວກັບ ວຽກງານຕ່າງໆໄດ້; ບໍ່ແມ່ນໃນລະດັບ 100%, ຊຶ່ງໝາຍຄວາມວ່າ ມີອໍານາດ ໃນການຕັດສິນໃຈ ແຕ່ຢູ່ໃນລະດັບໃດໜຶ່ງ.
4. ສາມາດເປັນຕົວແທນ ຂອງອົງກອນຂອງຕົນ ແລະ ເຄືອຂ່າຍ ທີ່ກວ້າງຂວາງໄດ້.

ພວກເຮົາບໍ່ຢາກໃຫ້ທ່ານກັງວົນ ກ່ຽວກັບ ລະດັບຄວາມອາດສາມາດຂອງຕົນຈົນເກີນໄປ, ເນື່ອງຈາກໃນຄະນະ MC ແມ່ນຜູ້ຕາງໜ້າ ທີ່ມາຈາກຫຼາຍອົງກອນ ທີ່ແຕກຕ່າງກັນ, ສະນັ້ນ, ການປະກອບສ່ວນ ແມ່ນຈະອີງຕາມທ່າແຮງ ຂອງແຕ່ລະບຸກຄົນ ແລະ ອົງກອນ. *ສິ່ງສຳຄັນທີ່ໃນຕົວບຸກຄົນ ຕ້ອງມີແມ່ນ ນ້ຳໃຈອາສາສະໝັກ ແລະ ຈິດວິນຍານ ໃນການຢາກບໍລິຫານ ແລະ ນຳພາເຄືອຂ່າຍ ໃຫ້ບັນລຸເປົ້າໝາຍ ຂອງເຄືອຂ່າຍ.*

# ຜົນປະໂຫຍດຈາກການເຂົ້າຮ່ວມໃນຄະນະ MC

## ຕໍ່ບຸກຄົນ:

- ເພີ່ມທັກສະ ແລະ ຄວາມຮູ້ ຄວາມສາມາດ ໃນການບໍລິຫານເຄືອຂ່າຍ ໂດຍຜ່ານການຮຽນຮູ້ຈາກຫຼາຍອົງກອນ.
- ມີເຄືອຂ່າຍທີ່ກວ້າງຂວາງຂຶ້ນ ແລະ ເອື້ອອໍານວຍ ການເຮັດວຽກ ຂອງຕົນເອງໃນອະນາຄົດ.
- ຖືກຮັບຮູ້ ແລະ ຍອມຮັບຈາກຄູ່ຮ່ວມງານ ຫຼາຍພາກສ່ວນ (ລັດຖະບານ, UN, ຜູ້ໃຫ້ທຶນ ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງອື່ນໆ) ໃນລະດັບທີ່ສູງຂຶ້ນ ແລະ ໃນລະດັບທີ່ໃກ້ຊິດຂຶ້ນ, ໂດຍຜ່ານການເປັນຕົວແທນ ເຄືອຂ່າຍເຂົ້າຮ່ວມໃນກອງປະຊຸມ ແລະ ການປຶກສາຫາລືຕ່າງໆ.
- ແລະ ອື່ນໆ...

## ຕໍ່ອົງກອນ:

- ອົງກອນຖືກຮັບຮູ້ ຈາກຄູ່ຮ່ວມງານ ໃນລະດັບທີ່ສູງຂຶ້ນ ແລະ ໃນລະດັບທີ່ໃກ້ຊິດຂຶ້ນ.
- ກາຍເປັນຄູ່ຮ່ວມງານຫຼັກ ແລະ ສາມາດ ມີສ່ວນຮ່ວມ ໃນການວາງແຜນນະໂຍບາຍ.
- ເພີ່ມໂອກາດ ໃນການຮູ້ຈັກ ແລະ ເຂົ້າເຖິງແຫຼ່ງທຶນ ໄດ້ດີຂຶ້ນ.
- ເພີ່ມໂອກາດ ໃນການປັບປຸງ ຫຼື ຂະຫຍາຍຂອບວຽກ/ແຜນງານ ຂອງອົງກອນ ໄດ້ງ່າຍຂຶ້ນ ໃນເວລາທີ່ຕ້ອງການ.
- ແລະ ອື່ນໆ...

# ໃນການສະໝັກ, ອົງກອນຂອງຜູ້ທີ່ຖືກສະເໜີຊື່ ຈະຕ້ອງໄດ້ສະໜອງຂໍ້ມູນດັ່ງຕໍ່ໄປນີ້:

1. ຊື່ ແລະ ນາມສະກຸນ:

2. ຕໍາແໜ່ງ/ ຊື່ອົງກອນ:

3. ການເຫັນດີ/ອະນຸມັດ ຈາກຫົວໜ້າອົງກອນ (ຖ້າຫາກຜູ້ທີ່ຖືກສະເໜີຊື່ ບໍ່ແມ່ນຫົວໜ້າອົງກອນເອງ),

ໃນເວລາທີ່ທ່ານ ສົ່ງອີເມລ໌ຫາ SUN CSA ກະລຸນາສໍາເນົາສົ່ງ (CC) ໃຫ້ກັບຫົວໜ້າອົງກອນທ່ານນໍາພ້ອມ

4. ອະທິບາຍປະສົບການ ໃນການເຮັດວຽກ ຂອງທ່ານ ໂດຍຫຍໍ້ (4 ແຖວ, ຫຼື 1 ວັກ)

5. ໂຄງການທີ່ກ່ຽວຂ້ອງກັບ ວຽກງານ ໂພຊະນາການ ທີ່ອົງກອນຂອງທ່ານ ຈັດຕັ້ງປະຕິບັດ

6. ອະທິບາຍວ່າ ທ່ານຈະສາມາດ ປະກອບສ່ວນ ເພື່ອສະໜັບສະໜູນ SUN CSA ໃຫ້ເປັນເຄືອຂ່າຍ ທີ່ມີ

ຄວາມຫ້າວຫັນ ແລະ ບັນລຸເປົ້າໝາຍ ຍຸດທະສາດ ດ້ານໂພຊະນາການ ຮ່ວມກັນໄດ້ຄື

# ຊ່ອງທາງໃນການເຂົ້າເຖິງຂໍ້ມູນຂ່າວສານ ຂອງ SUN CSA

- **Facebook page:** https://www.facebook.com/suncsalaos/
- **Facebook Group:** https://www.facebook.com/groups/suncsalao/
- **YouTube:** https://www.youtube.com/channel/UC7ZT8js2X1Z2RtmpAC5HzTw?view_as=subscriber
- **Website:** https: //www.suncsalaos.org/



# ຂໍຂອບໃຈສະມາຊິກທຸກທ່ານທີ່ໄດ້ຮ່ວມກັນເຮັດວຽກເພື່ອປັບປຸງໂພຊະນາ

care
ສະມາຄົມສົ່ງເສີມສຸຂະພາບຄອບຄົວ (PFHA)
CRS CATHOLIC RELIEF SERVICES
ສພປ/ARMI
PLAN INTERNATIONAL
RDA RURAL DEVELOPMENT AGENCY
Save the Children
APL+
JSI
HEALTH POVERTY ACTION
SNV
COSKA
World Vision
MCNV For Health and Development in South East Asia
MHP
caritas LUXEMBOURG in Laos
Burnet Institute Medical Research. Practical Action.
Association for Mutual Assistance
ສະມາຄົມຊ່ວຍເຫຼືອເຊິ່ງກັນ ແລະ ກັນ
CoDA COMMUNITY DEVELOPMENT ASSOCIATION
SAMDA
LAO GI LAO GEOGRAPHICAL INDICATION
DCYA
ADRA
ingo ລາວ network
ChildFund Laos

Scaling Up NUTRITION
Civil Society Alliance in Lao PDR

psi Laos
Swiss Red Cross
Sustainable Development Association
gda Gender Development Association
LIWG
GCDA
HUMANA People to People, Laos
ADWLE
LSDA
GRET Professionals for Fair Development
LDA
ECCDA
LCCO
LAO FRIENDS HOSPITAL FOR CHILDREN
APPREN
CDEA
Cord
CAMKID
AFC Agro-Forestry Consultant
SAEDA
RDSA
humanity & inclusion
ADSA
croix-rouge française PARTOUT OÙ VOUS AVEZ BESOIN DE NOUS
BORDA
CCL
PAKA
SENGSAVANG
World Renew
PEDA

# ຂໍຂອບໃຈ


Developing the 2026–2035 National Nutrition Strategy

Q&A


SUN CSA




LAO PDR